ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 217 /ລບ

ນະຄອນຫຼວງວຽງຈັນ, ວັນທີ 12.06.2023

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຂາເຂົ້າ
ເວລາ.......
ວັນທີເຂົ້າ 15/6/2023
ເລກທີເຂົ້າ.......
ສົ່ງເຖິງ 2952

# ດຳລັດ
# ວ່າດ້ວຍນາມມະຍົດນັກຂ່າວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍສື່ມວນຊົນ ສະບັບເລກທີ 01/ສພຊ ລົງວັນທີ 4 ພະຈິກ 2016;
- ອີງຕາມໜັງສືສະເໜີຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 244/ຖວທ, ລົງວັນທີ 2 ມິຖຸນາ 2023

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ໄດ້ກຳນົດ ຫຼັກການ, ລະບຽບການ ແລະ ເງື່ອນໄຂໃນການມອບນາມມະຍົດ ໃຫ້ຜູ້ເຄື່ອນໄຫວວຽກງານຖະແຫຼງຂ່າວ-ສື່ມວນຊົນ ທີ່ມີຜົນງານດີເດັ່ນ ແລະ ມີຄຸນງາມ ຄວາມດີທີ່ໄດ້ອຸທິດເຫື່ອແຮງ, ສະຕິປັນຍາເຂົ້າໃນການປະຕິບັດໜ້າທີ່ໃນການພັດທະນາຂະແໜງການຂອງຕົນ ເພື່ອຍ້ອງຍໍສັນລະເສີນ, ຈາລຶກບຸນຄຸນ ແລະ ຊຸກຍູ້ສົ່ງເສີມບົດບາດຂອງສື່ມວນຊົນລາວ ຢູ່ທຸກຂະແໜງການທີ່ໄດ້ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ຜູ້ທີ່ໄດ້ປະກອບສ່ວນເຂົ້າໃນການພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນທີ່ມີຜົນງານອັນໂດດເດັ່ນທາງດ້ານວັດຖຸ ແລະ ປັດໄຈ, ເພື່ອເປັນບ່ອນອີງໃນການປະຕິບັດນະໂຍບາຍດ້ານວັດຖຸ ແລະ ຈິດໃຈ ທັງເປັນການຍົກບົດບາດຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນລາວ ໃຫ້ສູງຂຶ້ນ.

### ມາດຕາ 2 ນາມມະຍົດນັກຂ່າວ

ນາມມະຍົດຂອງນັກຂ່າວ ແມ່ນການຍ້ອງຍໍສັນລະເສີນ, ຈາລຶກຄຸນງາມຄວາມດີ ຂອງນັກຂ່າວທີ່ມີຜົນງານດີເດັ່ນເຄື່ອນໄຫວວຽກງານຖະແຫຼງຂ່າວ-ສື່ມວນຊົນ, ຊຶ່ງເປັນການປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ກູ້ຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 3 ຫຼັກການໃຫ້ນາມມະຍົດນັກຂ່າວ

ການໃຫ້ນາມມະຍົດນັກຂ່າວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ;

2. ຮັບປະກັນເງື່ອນໄຂຄົບຖ້ວນ, ຖືກຕ້ອງຕາມຂັ້ນຕອນ, ຄັດເລືອກທີ່ຖືກຕ້ອງ, ຄວາມເປັນເອກະພາບລະຫວ່າງເນື້ອໃນ, ຮູບການ ແລະ ເປົ້າໝາຍການໃຫ້ນາມມະຍົດ;

3. ເປີດເຜີຍ, ສະເໝີພາບ, ໂປ່ງໃສ, ຍຸຕິທຳ ແລະ ທັນກັບສະພາບການ.

**ມາດຕາ 4 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວວຽກງານຖະແຫຼງຂ່າວ-ສື່ມວນຊົນ ແຫ່ງ ສປປ ລາວ.

## ໝວດທີ 2
## ປະເພດນາມມະຍົດ ແລະ ເປົ້າໝາຍຜູ້ທີ່ຈະໄດ້ຮັບນາມມະຍົດນັກຂ່າວ

**ມາດຕາ 5 ປະເພດນາມມະຍົດນັກຂ່າວ**

ນາມມະຍົດນັກຂ່າວ ປະກອບມີ ສາມ ປະເພດ ດັ່ງນີ້:

- ນາມມະຍົດນັກຂ່າວ ແຫ່ງຊາດ;
- ນາມມະຍົດນັກຂ່າວ ພັດທະນາ;
- ນາມມະຍົດນັກຂ່າວດີເດັ່ນ.

**ມາດຕາ 6 ນາມມະຍົດນັກຂ່າວແຫ່ງຊາດ**

ນາມມະຍົດນັກຂ່າວແຫ່ງຊາດ ແມ່ນການຍ້ອງຍໍສັນລະເສີນ ສຳລັບນັກຂ່າວ ແລະ ຜູ້ທີ່ເຮັດວຽກງານຖະແຫຼງຂ່າວ-ສື່ມວນຊົນ ທີ່ໄດ້ອຸທິດສະຕິປັນຍາ ແລະ ເຫື່ອແຮງເຂົ້າໃສ່ການປະຕິບັດໜ້າທີ່ຂອງຕົນ ຢ່າງມີຫົວຄິດປະດິດສ້າງ, ມີຜົນງານ ແລະ ຜະລິດຕະພັນອັນໂດດເດັ່ນ ຊຶ່ງເປັນທີ່ຍອມຮັບ, ນິຍົມຊົມຊອບຈາກປະຊາຊົນ ແລະ ສັງຄົມ ນັບແຕ່ສະໄໝການຕໍ່ສູ້ປົດປ່ອຍຊາດ ໃນແຕ່ລະໄລຍະ, ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຈົນມາເຖິງປະຈຸບັນ.

**ມາດຕາ 7 ນາມມະຍົດນັກຂ່າວພັດທະນາ**

ນາມມະຍົດນັກຂ່າວພັດທະນາ ແມ່ນການຍ້ອງຍໍສັນລະເສີນ ສຳລັບນັກຂ່າວ ແລະ ຜູ້ທີ່ໄດ້ປະກອບສ່ວນພັດທະນາວິຊາຊີບດ້ານຖະແຫຼງຂ່າວ-ສື່ມວນຊົນ ໄດ້ຢ່າງຫຼວງຫຼາຍ ແລະ ເປັນທີ່ຍອມຮັບ ຂອງສັງຄົມທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 8 ນາມມະຍົດນັກຂ່າວດີເດັ່ນ**

ນາມມະຍົດນັກຂ່າວດີເດັ່ນ ແມ່ນການຍ້ອງຍໍສັນລະເສີນ ສຳລັບນັກຂ່າວ ແລະ ຜູ້ທີ່ໄດ້ອຸທິດສະຕິປັນຍາ, ເຫື່ອແຮງຂອງຕົນ ດີເດັ່ນໃນການປະຕິບັດໜ້າທີ່ຂອງຕົນ ໂດຍມີຜົນງານອັນໂດດເດັ່ນ ຜ່ານຂະບວນການສຳຄັນ ທີ່ເປັນລັກສະນະຍຸດທະສາດຢູ່ໃນສະພາບແວດລ້ອມ ແລະ ເງື່ອນໄຂທີ່ຫຍຸ້ງຍາກສັບສົນ, ສຸກເສີນ ແລະ ພິເສດ ແລະ ສຳເລັດຕາມກຳນົດເວລາ ທີ່ຄາດໝາຍໄວ້.

**ມາດຕາ 9 ເປົ້າໝາຍທີ່ຈະໄດ້ຮັບນາມມະຍົດນັກຂ່າວ**

ເປົ້າໝາຍ ທີ່ຈະໄດ້ຮັບນາມມະຍົດນັກຂ່າວ ແມ່ນຜູ້ເຄື່ອນໄຫວວຽກງານຖະແຫຼງຂ່າວ-ສື່ມວນຊົນມາຕັ້ງແຕ່ສະໄໝຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດ ຈົນເຖິງປະຈຸບັນ ດັ່ງນີ້:

1. ຜູ້ເສຍຊີວິດ;
2. ຜູ້ຮັບອຸດໜູນບຳນານ;
3. ຜູ້ທີ່ຍັງສືບຕໍ່ປະຕິບັດໜ້າທີ່ວຽກງານຖະແຫຼງຂ່າວ-ສື່ມວນຊົນ;
4. ຜູ້ທີ່ໄດ້ປະກອບສ່ວນວັດຖຸ ແລະ ປັດໄຈເຂົ້າໃນການພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນ.

## ໝວດທີ 3
## ເງື່ອນໄຂ ແລະ ນະໂຍບາຍຕໍ່ຜູ້ທີ່ໄດ້ຮັບນາມມະຍົດນັກຂ່າວ

**ມາດຕາ 10 ເງື່ອນໄຂຜູ້ທີ່ໄດ້ຮັບນາມມະຍົດນັກຂ່າວແຫ່ງຊາດ**

ຜູ້ທີ່ໄດ້ຮັບນາມມະຍົດເປັນນັກຂ່າວແຫ່ງຊາດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ທີ່ມີຄວາມຈົ່ງຮັກພັກດີຕໍ່ພັກ-ລັດ, ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ບັນດາເຜົ່າ, ມີຄຸນສົມບັດສິນທຳປະຕິວັດ;

2. ເປັນຜູ້ທີ່ມີທັດສະນະຫຼັກໝັ້ນ, ຄຸນສົມບັດສິນທຳປະຕິວັດ, ມີຄວາມອົດທົນໝຽວແໜ້ນ ສຳເລັດໜ້າທີ່ວິຊາສະເພາະຂອງຕົນ, ມີຄວາມຕື່ນຕົວປະຕິບັດແນວທາງຂອງພັກ-ກົດໝາຍຂອງລັດ;

3. ເປັນຜູ້ໄດ້ປະກອບສ່ວນ ຢ່າງຕັ້ງໜ້າເຂົ້າໃນວຽກງານຖະແຫຼງຂ່າວ-ສື່ມວນຊົນໃນແຕ່ລະໄລຍະ, ສ້າງ ແລະ ນຳພາຄົນຮຸ່ນສືບທອດ ໂດຍຖ່າຍທອດບົດຮຽນ, ປະສົບການ ແລະ ຊ່ວຍເຫຼືອເພື່ອນຮ່ວມອາຊີບຢ່າງຈິງໃຈ;

4. ເປັນຜູ້ທີ່ມີພອນສະຫວັນ, ມີຄວາມຊຳນິຊຳນານ, ມີຫົວຄິດປະດິດສ້າງທີ່ໂດດເດັ່ນດ້ານວຽກງານຖະແຫຼງຂ່າວ-ສື່ມວນຊົນ ແລະ ເປັນທີ່ຍອມຮັບຈາກສັງຄົມ;

5. ເປັນຜູ້ທີ່ປະກອບສ່ວນເຂົ້າໃນວຽກງານຖະແຫຼງຂ່າວ-ສື່ມວນຊົນ ແລະ ບໍ່ເຄີຍຖືກລົງວິໄນ.

6. ເປັນຜູ້ທີ່ປະກອບສ່ວນໃນວຽກງານຖະແຫຼງຂ່າວ-ສື່ມວນຊົນ ຢ່າງຕໍ່ເນື່ອງ ນັບແຕ່ປີ 1955-1960;

7. ເປັນຜູ້ທີ່ປະກອບສ່ວນໃນວຽກງານຖະແຫຼງຂ່າວ-ສື່ມວນຊົນ ຢ່າງຕໍ່ເນື່ອງ ນັບແຕ່ປີ 1961-1975;

8. ເປັນຜູ້ທີ່ປະກອບສ່ວນໃນວຽກງານຖະແຫຼງຂ່າວ-ສື່ມວນຊົນ ນັບແຕ່ປີ 1976 ຢ່າງຕໍ່ເນື່ອງ ຊາວຫ້າປີ ຂຶ້ນໄປ;

9. ຫຼື ເປັນຜູ້ທີ່ປະກອບສ່ວນໃນວຽກງານຖະແຫຼງຂ່າວ-ສື່ມວນຊົນ ຢ່າງຕໍ່ເນື່ອງ ຊາວຫ້າ ປີ ຂຶ້ນໄປ.

**ມາດຕາ 11 ເງື່ອນໄຂຜູ້ທີ່ໄດ້ຮັບນາມມະຍົດນັກຂ່າວພັດທະນາ**

ຜູ້ຈະໄດ້ຮັບນາມມະຍົດເປັນນັກຂ່າວພັດທະນາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ທີ່ມີເງື່ອນໄຂຄືກັນກັບຂໍ້ 1, 2 ໃນມາດຕາ 10 ຂອງດຳລັດສະບັບນີ້;

2. ເປັນຜູ້ທີ່ເຮັດວຽກງານສື່ມວນຊົນເປັນອາຊີບຢ່າງຕໍ່ເນື່ອງແຕ່ເປັນເວລາ ສິບຫ້າ ປີ ຂຶ້ນໄປ;

3. ເປັນຜູ້ອອກຫົວຄິດປະດິດສ້າງສິ່ງໃໝ່ໆມາພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນ;

4. ເປັນຜູ້ໄດ້ຜະລິດບົດ, ຂ່າວ, ລາຍການ ສ່ອງແສງສັງຄົມທີ່ເຮັດໃຫ້ມີການປ່ຽນແປງພັດທະນາດີຂຶ້ນ;

5. ເປັນຜູ້ບໍ່ເຄີຍຖືກລົງວິໄນ.

**ມາດຕາ 12 ເງື່ອນໄຂຜູ້ທີ່ໄດ້ຮັບນາມມະຍົດນັກຂ່າວດີເດັ່ນ**

ຜູ້ຈະໄດ້ຮັບນາມມະຍົດເປັນນັກຂ່າວດີເດັ່ນ ຕ້ອງມີເງື່ອນໄຂ ດັ່ງນີ້

1. ເປັນຜູ້ທີ່ມີເງື່ອນໄຂຄືກັນກັບຂໍ້ 1, 2 ໃນມາດຕາ 10 ຂອງດຳລັດ ສະບັບນີ້;

2. ເປັນຜູ້ທີ່ເຮັດວຽກງານຖະແຫຼງຂ່າວ-ສື່ມວນຊົນເປັນອາຊີບ ທີ່ໄດ້ອຸທິດສະຕິປັນຍາ, ເຫື່ອແຮງຂອງຕົນຕະລຸມບອນໃນການປະຕິບັດໜ້າທີ່ຂອງຕົນ ໂດຍມີຜົນງານອັນໂດດເດັ່ນ ຜ່ານຂະບວນການສຳຄັນ ທີ່ເປັນລັກສະນະຍຸດທະສາດຢູ່ໃນສະພາບແວດລ້ອມ ແລະ ເງື່ອນໄຂທີ່ຫຍຸ້ງຍາກສັບສົນ, ສູກເສີນ ແລະ ພິເສດ ນັບແຕ່ 1 ບົດຂຶ້ນໄປ ແລະ ສຳເລັດຕາມກຳນົດເວລາ ທີ່ຄາດໝາຍໄວ້.

**ມາດຕາ 13 ອົງການທີ່ສະເໜີໃຫ້ນາມມະຍົດນັກຂ່າວ**

ອົງການທີ່ມີສິດສະເໜີໃຫ້ນາມມະຍົດນັກຂ່າວ ມີ ດັ່ງນີ້:

1. ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

2. ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;

3. ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ;

4. ອົງການເຈົ້າຂອງສື່ມວນຊົນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;
5. ອົງການສື່ມວນຊົນທີ່ຂຶ້ນກັບອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງມະຫາຊົນ;
6. ສະມາຄົມນັກຂ່າວ ແຫ່ງ ສປປ ລາວ.

**ມາດຕາ 14 ການປະກອບເອກະສານ ແລະ ຂັ້ນຕອນການດໍາເນີນເອກະສານ**

ເອກະສານປະກອບໃນການສະເໜີ ໃຫ້ນາມມະຍົດນັກຂ່າວ ມີ ດັ່ງນີ້:

1. ໜັງສືສະເໜີຂໍຮັບນາມມະຍົດຈາກອົງການເຈົ້າຂອງສື່ມວນຊົນທີ່ກ່ຽວຂ້ອງ;
2. ປະຫວັດ, ຜົນງານ ແລະ ຜະລິດຕະພັນຂອງຜູ້ສະເໜີຮັບນາມມະຍົດ;
3. ເອກະສານຢັ້ງຢືນຜົນງານ ຫຼື ຜະລິດຕະພັນຈາກອົງການສື່ທີ່ຜູ້ກ່ຽວສັງກັດຢູ່ເພື່ອເປັນຫຼັກຖານ;
4. ນໍາສົ່ງໜັງສືສະເໜີຂໍຮັບນາມມະຍົດໃຫ້ຄະນະກໍາມະການປະເມີນການໃຫ້ນາມມະຍົດນັກຂ່າວ.

**ມາດຕາ 15 ການພິຈາລະນາໃຫ້ນາມມະຍົດ**

ການພິຈາລະນາໃຫ້ນາມມະຍົດແຕ່ລະປະເພດ ໃຫ້ອີງໃສ່ຜົນງານຕົວຈິງ ຢ່າງພາວະວິໄສ ບົນພື້ນຖານທີ່ຜູ້ກ່ຽວຂຽນຜົນງານ ແລະ ຜະລິດຕະພັນຄົບຕາມເງື່ອນໄຂ ໂດຍມີການຢັ້ງຢືນຈາກອົງການສະເໜີ ແລະ ໄດ້ຮັບການເຫັນດີເປັນເອກະພາບກັນຕາມຫຼັກການສຽງສ່ວນໜ້ອຍ ຂຶ້ນກັບສຽງສ່ວນຫຼາຍ ຂອງຄະນະກໍາມະການພິຈາລະນາໃຫ້ນາມມະຍົດ.

**ມາດຕາ 16 ນະໂຍບາຍຕໍ່ຜູ້ທີ່ໄດ້ຮັບນາມມະຍົດນັກຂ່າວ**

ນັກຂ່າວທີ່ໄດ້ຮັບນາມມະຍົດ ຈະໄດ້ຮັບການນະໂຍບາຍດັ່ງນີ້:

1. ນາມມະຍົດນັກຂ່າວແຫ່ງຊາດ ໄດ້ຮັບໃບຢັ້ງຢືນນາມມະຍົດ ແລະ ຫຼຽນນາມມະຍົດນັກຂ່າວ;
2. ນາມມະຍົດນັກຂ່າວພັດທະນາ ໄດ້ຮັບໃບຢັ້ງຢືນນາມມະຍົດ ແລະ ຫຼຽນນາມມະຍົດນັກຂ່າວ;
3. ນາມມະຍົດນັກຂ່າວຕະລຸມບອນໄດ້ຮັບໃບຢັ້ງຢືນນາມມະຍົດ ແລະ ຫຼຽນນາມມະຍົດນັກຂ່າວ.

**ມາດຕາ 17 ການຖອນນາມມະຍົດນັກຂ່າວ**

ໃນກໍລະນີ ຜູ້ທີ່ໄດ້ຮັບນາມມະຍົດນັກຂ່າວ ຫາກມີການກະທໍາທີ່ເສື່ອມເສຍກຽດສັກສີ, ມີການລະເມີດ ກົດໝາຍຢ່າງຮ້າຍແຮງ ແລະ ຖືກຕັດອິດສະຫຼະພາບ ຈະໄດ້ຖືກຖອນນາມມະຍົດນັກຂ່າວ ຄະນະກໍາມະການປະເມີນການໃຫ້ນາມມະຍົດນັກຂ່າວ ສາມາດຄົ້ນຄວ້າພິຈາລະນາ ແລະ ນໍາສະເໜີຕໍ່ຂັ້ນເທິງ ເພື່ອຖອນນາມມະຍົດ.

## ໝວດທີ 4
## ຄະນະກໍາມະການປະເມີນການໃຫ້ນາມມະຍົດນັກຂ່າວ

**ມາດຕາ 18 ຄະນະກໍາມະການປະເມີນການໃຫ້ນາມມະຍົດນັກຂ່າວ**

ຄະນະກໍາມະການປະເມີນການໃຫ້ນາມມະຍົດນັກຂ່າວມີ ດັ່ງນີ້:

1. ຮອງລັດຖະມົນຕີ ຜູ້ຊີ້ນໍາວຽກງານຖະແຫຼງຂ່າວ ເປັນປະທານ;
2. ຜູ້ຕາງໜ້າສະມາຄົມນັກຂ່າວແຫ່ງ ສປປ ລາວ ເປັນຮອງປະທານ;
3. ຫົວໜ້າກົມຈັດຕັ້ງ-ພະນັກງານ ເປັນຄະນະ;
4. ຫົວໜ້າຫ້ອງການ ເປັນຄະນະ;
5. ຫົວໜ້າກົມກວດກາ ເປັນຄະນະ;
6. ຫົວໜ້າກົມສື່ມວນຊົນ ເປັນຄະນະ;
7. ຫົວໜ້າອົງການສື່ມວນຊົນທີ່ມີຖານະທຽບເທົ່າກົມ ຢູ່ໃນໂຄງປະກອບການຈັດຕັ້ງຂອງກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນຄະນະ;
8. ຕາງໜ້າອົງການສື່ມວນຊົນ ທີ່ຂຶ້ນກັບອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງ

ມະຫາຊົນ ເປັນຄະນະ;

9. ຕາງໜ້າຄະນະໂຄສະນາອົບຮົມສູນກາງພັກ ເປັນຄະນະ;

10. ຕາງໜ້າອົງການເຈົ້າຂອງສື່ມວນຊົນທີ່ສະເໜີເອົານາມມະຍົດ ເປັນຄະນະ.

ຄະນະກຳມະການປະເມີນການໃຫ້ນາມມະຍົດນັກຂ່າວ ສາມາດແຕ່ງຕັ້ງພະນັກງານວິຊາການຊ່ວຍວຽກໃນກໍລະນີເຫັນວ່າມີຄວາມຈຳເປັນ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປະເມີນການໃຫ້ນາມມະຍົດນັກຂ່າວ**

ຄະນະກຳມະການປະເມີນນາມມະຍົດນັກຂ່າວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກ່ຽວກັບການຄົ້ນຄວ້າ, ການປະເມີນນາມມະຍົດນັກຂ່າວ ແລະ ການຖອນນາມມະຍົດນັກຂ່າວ;

2. ສະເໜີ ລັດຖະມົນຕີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະເໜີຕໍ່ນາຍົກລັດ ຖະມົນຕີ ເພື່ອສະເໜີຕໍ່ປະທານປະເທດ ພິຈາລະນາຕົກລົງໃຫ້ນາມມະຍົດນັກຂ່າວແຫ່ງຊາດ ແລະ ການຖອນນາມມະຍົດນັກຂ່າວແຫ່ງຊາດ;

3. ສະເໜີລັດຖະມົນຕີ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະເໜີຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງໃຫ້ນາມມະຍົດນັກຂ່າວພັດທະນາ ແລະ ການຖອນນາມມະຍົດນັກຂ່າວພັດທະນາ;

4. ສະເໜີລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອພິຈາລະນາຕົກລົງໃຫ້ນາມມະຍົດນັກຂ່າວຕະລຸມບອນ ແລະ ການຖອນນາມມະຍົດນັກຂ່າວຕະລຸມບອນ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນທີ່ນຳໃຊ້ເຂົ້າໃນວຽກປະເມີນການໃຫ້ນາມມະຍົດນັກຂ່າວ ແລະ ການຖອນນາມມະຍົດນັກຂ່າວ.

**ມາດຕາ 20 ໄລຍະເວລາການສະເໜີນາມມະຍົດນັກຂ່າວ**

ໄລຍະເວລາການຄົ້ນຄວ້າ ແລະ ນຳສະເໜີນາມມະຍົດນັກຂ່າວ ໂດຍປົກກະຕິ ທຸກຫ້າປີ. ໃນກໍລະນີມີຄວາມຮຽກຮ້ອງຕ້ອງການ ໃນການໃຫ້ນາມມະຍົດນັກຂ່າວຕະລຸມບອນແມ່ນໃຫ້ອີງໃສ່ການຕົກລົງກອງປະຊຸມສະໄໝວິສາມັນ ຂອງຄະນະກຳມະການ ປະເມີນການໃຫ້ນາມມະຍົດນັກຂ່າວ.

## ໝວດທີ 5
## ການກວດກາ

**ມາດຕາ 21 ການກວດກາ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການກວດກາກ່ຽວກັບວຽກງານນາມມະຍົດນັກຂ່າວ.

**ມາດຕາ 22 ເນື້ອໃນກວດກາ**

ການກວດກາວຽກງານນາມມະຍົດຂອງນັກຂ່າວ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດດຳລັດ ແລະ ລະບຽບການກ່ຽວກັບການໃຫ້ນາມມະຍົດນັກຂ່າວ;
2. ການໃຫ້ນາມມະຍົດນັກຂ່າວ ແລະ ການຖອນນາມມະຍົດນັກຂ່າວ;
3. ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການນາມມະຍົດນັກຂ່າວ;
4. ການນຳໃຊ້ງົບປະມານໃນການເຄື່ອນໄຫວວຽກງານດັ່ງກ່າວ;
5. ການຈັດຕັ້ງປະຕິບັດດຳລັດ ແລະ ລະບຽບການຂອງບັນດານັກຂ່າວສື່ມວນຊົນ.

**ມາດຕາ 23 ຮູບການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ກຳນົດເວລາອັນແນ່ນອນ;

2. ການກວດໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາຕາມຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງອົງການເຈົ້າຂອງສື່ມວນຊົນ, ອົງການສື່ມວນຊົນ, ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ ໂດຍແຈ້ງໃຫ້ເປົ້າໝາຍຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍຮູ້ກ່ອນລ່ວງໜ້າ, ເຊິ່ງການດຳເນີນການກວດກາລັກສະນະດັ່ງກ່າວ ຄະນະກວດກາຕ້ອງປະຕິບັດສິດ ແລະ ໜ້າທີ່ດ້ວຍຄວາມເປັນທຳ ແລະ ຖືກຕ້ອງຕາມລະບຽບການຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 24 ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ຄະນະກຳມະການປະເມີນໃຫ້ນາມມະຍົດນັກຂ່າວ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 25 ງົບປະມານ

ງົບປະມານທີ່ ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດມີດັ່ງນີ້:

1. ງົບປະມານຂອງລັດໂດຍຄິດໄລ່ເຂົ້າໃນແຜນງົບປະມານປະຈຳປີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ລາຍຮັບວິຊາການ ແລະ ການປະກອບສ່ວນຂອງສັງຄົມ.

### ມາດຕາ 26 ຜົນສັກສິດ

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

**ຕາງໜ້າລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ

ເອກະສານເຂົ້າຖານຂໍ້ມູນ:13:37:55 ໂມງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ **2952** /ຫກ

ນະຄອນຫຼວງວຽງຈັນ, ວັນທີ ***15/06/2023***

☐ **ໃບຕິດຕາມເອກະສານ**

☐ **ໜັງສືສະເໜີ**

☐ ດ່ວນທີ່ສຸດ ☐ ດ່ວນ ☑ ປົກກະຕິ ☐ ລັບທີ່ສຸດ ☐ ລັບ

**ຮຽນ/ເຖິງ** [illegible]

**ເລື່ອງ: ດຳລັດ ວ່າດ້ວຍນາມມະຍົດນັກຂ່າວ.**

ຈາກ **ລັດຖະບານ**, ເລກທີ **217** , ວັນທີ **2023-06-12**.

ຄຳເຫັນ [illegible]

[illegible]

ວັນທີ 21/6/2023 ເຊັນ

ຊຽນ ຫຼື ປະທັບຕາຊື່...

ບຸນເພັງ ສຸພາບ

☐ ຂໍຄຳຕົກລົງ ☑ ຂໍຄຳເຫັນ ☐ ຂໍລາຍເຊັນ ☐ ເພື່ອພິຈາລະນາ ☐ ເພື່ອຊາບ ☐ ເພື່ອລາຍງານ

ຄຳເຫັນ [illegible]

[illegible]

[illegible]

ວັນທີ 26/6/2023 ເຊັນ

ຊຽນ ຫຼື ປະທັບຕາຊື່...